ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ
Lao Culture Tourism Public Group Company

ເລກທີ...210.../ບທວລ
ນະຄອນຫຼວງວຽງຈັນ, ວັນທີ 04 NOV 2025

ຮຽນ : ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື;
ທ່ານ ຜູ້ອຳນວຍການໃຫ່ຍ ຕະຫຼາດຫຼັກຊັບລາວ ທີ່ນັບຖື;
ທ່ານ ຜູ້ຖືຮຸ້ນ ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ທີ່ນັບຖື,

ເລື່ອງ : ແຈ້ງມະຕິຂອງກອງປະຊຸມສາມັນສະພາບໍລິຫານ ຄັ້ງທີ 2 ປີ 2025 (ເພີ່ມເຕີມ).

- ອີງຕາມຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ (ສະບັບປັບປຸງ) ຂອງ ສຄຄຊ ສະບັບ ເລກທີ 15/ສສຄ ລົງວັນທີ 11 ທັນວາ ປີ 2024.
- ອີງຕາມ ລະບຽບຂອງຕະຫຼາດຫຼັກຊັບລາວວ່າດວ້ຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊລ, ລົງ ວັນທີ 27 ກັນຍາ 2018.
- ອີງຕາມ ແຈ້ງມະຕິກອງປະຊຸມສະພາບໍລິຫານເພີ່ມເຕີ່ມ ເລກທີ 204/ບທວລ, ລົງວັນທີ 28 ຕຸລາ 2025.

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ (ບທວລ) ຂໍຖືເປັນກຽດແຈ້ງມາຍັງທ່ານຊາບກ່ຽວ ກັບວາລະກອງປະຊຸມຜູ້ຖືຮຸ້ນວິສາມັນ ຄັ້ງທີ 1 ປະຈຳ 2025 ທີ່ເປີດເຜີຍໃນວັນທີ 28/10/2025 ມີການປ່ຽນແປງ ເນື່ອງຈາກ ບາງວາລະ ແມ່ນຂຶ້ນກັບສິດ ແລະ ພາລະບົດບາດຂອງສະພາບໍລິຫານແລ້ວ ຈຶ່ງບໍ່ຈຳເປັນຕ້ອງສະເໜີ ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ຮັບຮອງ ເປັນຕົ້ນ:

1) ພິຈາລະນາ ແລະ ຮັບຮອງ ບົດລາຍງານສະພາບວຽກງານການສະສາງຊັບສິນບັດ.
2) ພິຈາລະນາ ແລະ ຮັບຮອງ ການປັບປຸງໂຄງຮ່າງການຈັດຕັ້ງ.
3) ພິຈາລະນາ ແລະ ຮັບຮອງການປັບປຸງໜ້າທີ່ຄວາມຮັບຜິດຊອບຂອງຜູ້ບໍລິຫານຂັ້ນສູງ.

ວາລະທີ່ຈະນຳສະເໜີ ກອງປະຊຸມຜູ້ຖືຮຸ້ນວິສາມັນ ຄັ້ງທີ 1 ປະຈຳປີ 2025 ມີດັ່ງນີ້:

1) ພິຈາລະນາ ແລະ ຮັບຮອງ ການສະເໜີສືບຕໍ່ຮັກສາຖານະເປັນບໍລິສັດຈົດທະບຽນໃນຕະຫຼາດຫຼັກ ຊັບລາວ.
2) ພິຈາລະນາ ແລະ ຮັບຮອງ ແຜນການດຳເນີນທຸລະກິດ ໃນປີ 2026-2028 ຂອງກຸ່ມ ບທວລ.
3) ພິຈາລະນາ ແລະ ຮັບຮອງ ການປ່ຽນຜູ້ອຳນວຍການໃຫ່ຍ.
4) ພິຈາລະນາ ແລະ ຮັບຮອງ ການປ່ຽນສະມາຊິກສະພາບໍລິຫານ.

ສຳລັບມື້ປິດປຶ້ມທະບຽນຜູ້ຖືຮຸ້ນ, ວັນ, ເວລາ ແລະ ສະຖານທີ່ຈັດກອງປະຊຸມຜູ້ຖືຮຸ້ນວິສາມັນດັ່ງກ່າວ ແມ່ນບໍ່ມີການປ່ຽນແປງ.

ດັ່ງນັ້ນ, ຈຶ່ງຮຽນມາເພື່ອຊາບ ແລະໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືຢ່າງສູງ.

ປະທານສະພາບໍລິຫານບໍລິສັດ

ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳ ລາວ ມະຫາຊົນ Lao Culture Tourism Public Group Company

ເນ້ຍເຫຼ້ຍ